ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫລຸດຜ່ອນຄວາມທຸກຍາກ

ເລກທີ ...2365.../ທລຍ

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ຈັດຊື້ເຄື່ອງ IT Equipment

ສັນຍາເລກທີ: PRF.III-AF/IT.Equipment/G-S/2024 (AF-G-040)

ເຖິງ: ____________________________________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດຊື້ເຄື່ອງ IT Equipment ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນບໍລິສັດ/ຮ້ານ ຂອງທ່ານ ເຂົ້າຍື່ນຊອງປະມູນແບບສົມທຽບລາຄາ ສຳລັບຈັດຊື້ເຄື່ອງ IT Equipment ດັ່ງກ່າວ, ໄລຍະເວລາໃນການສົ່ງມອບສິນຄ້າ ແມ່ນ 20 ວັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ 7 ມິຖຸນາ 2024 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ , ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 15:00 ໂມງ ຂອງວັນທີ 7 ມິຖຸນາ 2024 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນສີສະຫວາດ, ບ້ານນາໄຮ່ດຽວ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ. ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80.

ຜູ້ອຳນວຍການ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫລຸດຜ່ອນຄວາມທຸກຍາກ



ພັດນະຄອນ ຄັນທະມີໄຊ